# ບົດອອກຂ່າວ
# ທູດລາວ ຍື່ນສານຕາຕັ້ງຕໍ່ສົມເດັດລາຊີນີ
# ແຫ່ງລາຊະນາອາຈັກ ເດັນມາກ

***********

ໃນວັນທີ 25 ພະຈິກ 2011 ຜ່ານມາ ທ່ານທູດ ສຸທໍາ ສາກົນນິຍົມ ໄດ້ເຂົ້າຍື່ນສານຕາຕັ້ງຕໍ່ອົງສົມເດັດລາຊີນີ ມາກເກຼີດ II (Margret II) ແຫ່ງລາຊະອານາຈັກເດັນມາກ ທີ່ລາຊະວັງຫຼວງ ເພື່ອດໍາລົງຕໍາແໜ່ງເປັນເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມແຫ່ງ ສປປ ລາວ ປະຈໍາລາຊະອານາຈັກເດັນມາກອີກຕໍາແໜ່ງໜຶ່ງ ໂດຍມີທີ່ພໍານັກຢູ່ບຣຸກແຊນ, ປະເທດແບນຊິກ.

ການຍື່ນສານຕາຕັ້ງໄດ້ດໍາເນີນໄປຢ່າງສົມກຽດ ແລະ ສົມຖານະ, ໃນໂອກາດດັ່ງກ່າວນີ້ ທ່ານສຸທໍາ ສາກົນນິຍົມ ໄດ້ນໍາເອົາຄໍາວວຍພອນ, ໄມຕີຈິດມິດຕະພາບອັນເລິກເຊິ່ງ, ຄວາມສະນິດສະໜົມພ້ອມຄວາມ ເຄົາລົບນັບຖືຢ່າງສູງ ຂອງພະນະ ທ່ານ ຈູມມະລີ ໄຊຍະສອນ, ປະທານປະເທດແຫ່ງ ສປປ ລາວ ມາຍັງອົງສົມເດັດ ລາຊີນີມາກເກຼີດ II ເພື່ອຄວາມຜາສຸກຂອງສົມເດັດລາຊີນີ ແລະ ຄວາມວັດທະນາຖາວອນແຫ່ງລາຊະອານາຈັກເດັນມາກ. ນອກຈາກນັ້ນແລ້ວ, ກໍໄດ້ແຈ້ງໃຫ້ອົງສົມເດັດລາຊີນີຊາບໂດຍຫຍໍ້ຄວາມກ້າວໜ້າຂອງການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ຕະຫຼອດໄລຍະ 36 ປີ ຜ່ານມາ ໂດຍສະເພາະການກະກຽມຈັດກອງປະຊຸມສຸດຍອດອາແຊມຄັ້ງທີ 9 ໃນຕົ້ນເດືອນພະຈິກ 2012 ທີ່ນະ ຄອນຫຼວງວຽງຈັນ.

ອົງສົມເດັດລາຊີນີໄດ້ໃຫ້ການໂອ້ລົມພາຍໃຕ້ບັນຍາກາດອັນອົບອຸ່ນ ໂດຍໄດ້ສົນໃຈເປັນພິເສດວຽກງານດ້ານການທ່ອງທ່ຽວ, ຮີດຄອງປະເພນີ ແລະ ສິນລະປະວັດທະນະທໍາຂອງລາວ. ເພິ່ນໄດ້ໃຫ້ການຍ້ອງຍໍວ່າ ປະເທດລາວເປັນປະເທດທີ່ມີຄວາມສະຫງົບສຸກຮົ່ມເຢັນ, ວັດທະນະທໍາງົດງາມ, ປະຊາຊົນມີນໍ້າໃຈດີ.